ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0673 /ອຄ.ກຄພນ.

ນະຄອນຫລວງວຽງຈັນ, ວັນທີ 25 ພຶດສະພາ 2018.

# ແຈ້ງການ

ຮຽນ: ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສ, ບັນດາບໍລິສັດນ້ຳມັນເຊື້ອໄຟ.

ເລື່ອງ: ແຈ້ງລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍສ່ວຍສາອາກອນ ເລກທີ 70/ສພຊ, ລົງວັນທີ 15/12/2015.
- ອີງຕາມ ແຈ້ງການຂອງຫ້ອງວ່າການລັດຖະບານ ເລກທີ 324/ຫລບ.ກລຊ, ລົງວັນທີ 4/3/2016.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 636/ຫສນຍ.ກສສ, ລົງວັນທີ 5/5/2016.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 684/ຫສນຍ.ກລຊ, ລົງວັນທີ 17/5/2016.

ເພັດສະຖາພອນ ແກ້ວວົງວິຈິດ

ກະຊວງອຸດສາຫະກຳ ແລະ ການຄ້າ, ຂໍແຈ້ງມາຍັງສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ ໃຫ້ປັບລາຄາຂາຍຍ່ອຍນ້ຳມັນເຊື້ອໄຟເຂດເທດສະບານແຂວງ, ນະຄອນຫລວງ ດັ່ງນີ້:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫລວງວຽງຈັນ | 10,510 | 9,370 | 8,400 |
| 2 | ແຂວງຜົ້ງສາລີ | - | 10,130 | 9,160 |
| 3 | ແຂວງຫລວງນ້ຳທາ | - | 9,730 | 8,760 |
| 4 | ແຂວງອຸດົມໄຊ | 10,990 | 9,850 | 8,880 |
| 5 | ແຂວງບໍ່ແກ້ວ | 10,610 | 9,470 | 8,500 |
| 6 | ແຂວງຫລວງພະບາງ | 10,970 | 9,830 | 8,860 |
| 7 | ແຂວງໄຊຍະບູລີ | - | 9,770 | 8,800 |
| 8 | ແຂວງຫົວພັນ | - | 9,770 | 8,800 |
| 9 | ແຂວງຊຽງຂວາງ | - | 9,560 | 8,590 |
| 10 | ແຂວງວຽງຈັນ | 10,510 | 9,370 | 8,400 |
| 11 | ແຂວງບໍລິຄຳໄຊ | 10,590 | 9,450 | 8,480 |
| 12 | ແຂວງຄຳມ່ວນ | 10,540 | 9,400 | 8,430 |
| 13 | ແຂວງສະຫວັນນະເຂດ | 10,540 | 9,400 | 8,430 |
| 14 | ແຂວງສາລະວັນ | - | 9,580 | 8,610 |
| 15 | ແຂວງຈຳປາສັກ | 10,570 | 9,430 | 8,460 |
| 16 | ແຂວງເຊກອງ | - | 9,610 | 8,640 |
| 17 | ແຂວງອັດຕະປື | 10,750 | 9,610 | 8,640 |
| 18 | ແຂວງໄຊສົມບູນ | - | 9,610 | 8,640 |

- ລາຄາໃໝ່ນີ້ ໃຫ້ເລີ່ມປະຕິບັດ ວັນທີ 26/05/2018 ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ;
- ການປັບລາຄາຄັ້ງນີ້ ໄດ້ຫຼຸດຖັງແຮລົງ 50 ກີບ/ລິດ, ຫຼຸດຄ່າກອດນັບບໍລິມາດລົງ 10 ກີບ/ລິດ ສຳລັບ ແອັດຊັງທຳມະດາ ແລະ ກາຊວ
  ແລະ ປັບລາຄາຂາຍຍ່ອຍຂຶ້ນຄື: ແອັດຊັງພິເສດ 200 ກີບ/ລິດ, ແອັດຊັງທຳມະດາ 100 ກີບ/ລິດ ແລະ ກາຊວນ 100 ກີບ/ລິດ.

- ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນ ຂ້າງເທິງນີ້ ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນ ໃຫ້ບໍລິການຢ່າງເປັນປົກກະຕິ;
- ການຄິດໄລ່ເສັຍພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ໃນໂຄງສ້າງ ລາຄານ້ຳມັນເຊື້ອໄຟ ສະບັບເລກທີ 0629/ກຄພນ.ລຊ ລົງວັນທີ 25/05/2018 ຈົນກວ່າຈະມີການປ່ຽນແປງ;
- ແຈ້ງການສະບັບນີ້ ປ່ຽນແທນແຈ້ງການສະບັບເລກທີ 0582/ອຄ.ກຄພນ, ລົງວັນທີ 17 ພຶດສະພາ 2018.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ລັດຖະມົນຕີ

ນ ເຂັມມະນີ ພົນເສນາ

<u>ບ່ອນສົ່ງ</u>

- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອຊາບ ແລະ ໃຫ້ຄວາມຮ່ວມມື).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ).
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ທົ່ວປະເທດ (ເພື່ອຊາບ ແລະ ຕິດຕາມ).